

ຖະໜົນແຄມຂອງ, ບ້ານພັດທະນາຫຼັກເມືອງ, ນະຄອນປາກເຊ, ແຂວງ ຈຳປາສັກ, 031 214 129, https://www.bol.gov.la/champasak

# ກອງປະຊຸມເຜີຍແຜ່ວຽກງານຄຸ້ມຄອງສາງ ແລະ ຄັງເງິນສົດ ຂອງ ທຫລ ຢູ່ ສາຂາທຫລ ພາກໃຕ້ ແຂວງຈຳປາສັກ




ໃນວັນທີ 29 ສິງຫາ 2025 ທີ່ຜ່ານມາ ກົມພິມຈຳໜ່າຍ, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມເຜີຍແຜ່ວຽກງານການຄຸ້ມຄອງສາງ ແລະ ຄັງເງິນສົດ ຂອງ ທຫລ ຂຶ້ນຢູ່ ສາຂາທຫລ ພາກໃຕ້ ແຂວງຈຳປາສັກ, ພາຍໃຕ້ການເຂົ້າຮ່ວມເປັນຄະນະປະທານຂອງ ທ່ານ ທີລະຍຸດ ພາດວນສິນ ຮອງຫົວໜ້າກົມພິມຈຳໜ່າຍ, ທ່ານນາງ ສີພະຈັນ ເຂັມມະນີວົງ ຮອງຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ, ເຂົ້າຮ່ວມມີ ທ່ານ ສຸກພະຈັນ ວົງສັກ ຮອງຫົວໜ້າກົມກວດກາ; ພ້ອມນີ້, ກໍ່ມີບັນດາຄະນະພະແນກ ແລະ ວິຊາການພາຍໃນສາຂາ ເຂົ້າຮ່ວມທັງໝົດ 27 ທ່ານ, ຍິງ 11 ທ່ານ.









ໃນວາລະ ຄະນະຮັບຜິດຊອບຈາກກົມພິມຈຳໜ່າຍ ໄດ້ຂຶ້ນນຳສະເໜີ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສາງ ແລະ ຄັງເງິນສົດຂອງ ທຫລ ສະບັບເລກທີ 01/ທຫລ, ລົງວັນທີ 02 ມັງກອນ 2020 ຊຶ່ງລະບຽບການດັ່ງກ່າວ ໄດ້ນຳໃຊ້ເປັນບ່ອນອີງໃນການຄຸ້ມຄອງສາງ ແລະ ຄັງເງິນສົດ ທົ່ວລະບົບ ທຫລ, ແນໃສ່ໃນການປົກປັກຮັກສາສາງເງິນສົດ ໃຫ້ມີຄວາມປອດໄພຮອບດ້ານ ແລະ ຮັບປະກັນຄວາມຖືກຕ້ອງໂປ່ງໃສ ໃນການເຄື່ອນໄຫວຂອງເງິນສົດ. ໂອກາດດັ່ງກ່າວ, ຜູ້ເຂົ້າຮ່ວມກໍ່ໄດ້ມີການປະກອບຄຳຄິດ-ຄຳເຫັນ ຢ່າງກົງໄປກົງມາ ຕໍ່ບັນຫາເຈາະຈີ້ມ ແລະ ເນື້ອໃນອື່ນໆ ທີ່ຕິດພັນກັບວຽກງານການຄຸ້ມຄອງສາງ ແລະ ຄັງເງິນສົດຂອງ ທຫລ.

ຕອນທ້າຍກອງປະຊຸມ ທ່ານ ນາງ ສີພະຈັນ ເຂັມມະນີວົງ ຮອງຫົວໜ້າສາຂາ ທຫລ ພາກໃຕ້ ແຂວງຈຳປາສັກ ໄດ້ມີຄຳເຫັນ ແລະ ຮຽກຮ້ອງມາຍັງພະນັກງານ ທີ່ຮັບຜິດຊອບວຽກງານສາງ-ຄັງເງິນສົດ ໃຫ້ຍົກສູງສະຕິໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ; ພ້ອມດຽວກັນນັ້ນ, ສະເໜີໃຫ້ຄະນະຮັບຜິດຊອບ ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມໃນຄັ້ງນີ້ ໄປຄົ້ນຄວ້າປັບປຸງ ໃຫ້ສອດຄ່ອງກັບສະພາບການຈັດຕັ້ງປະຕິບັດວຽກງານຕົວຈິງ.